ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

----------=) 000 (=----------

ສຳນັກງານນາຍົກລັດຖະມົນຕີ

ເລກທີ...03/ນຍ

## ດຳລັດ
## ວ່າດ້ວຍ ການບັນຊີ ຂອງ ທະນາຄານແຫ່ງ ສ.ປ.ປ.ລາວ ແລະ ສະຖາບັນການເງິນ ທີ່ຂຶ້ນກັບທະນາຄານແຫ່ງ ສ.ປ.ປ.ລາວ

- ອີງຕາມກົດໝາຍການບັນຊີວິສາຫະກິດ ສະບັບເລກທີ 12 / 90 / ສປສ ລົງວັນທີ 18 ທັນວາ 1990;
- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 05/95 ລົງວັນທີ 14 ຕຸລາ 1995;
- ອີງຕາມມາດຕາ 14 ຂອງກົດໝາຍ ວ່າດ້ວຍການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂອງຕ່າງປະເທດຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 01/94 ລົງວັນທີ 14 ມີນາ 1994;
- ອີງຕາມກົດໝາຍວ່າດ້ວຍການສົ່ງເສີມ ການລົງທຶນພາຍໃນ ສະບັບເລກທີ 03/95/ສພຊ ລົງວັນທີ 14 ຕຸລາ 1995;
- ອີງຕາມ ດຳລັດວ່າດ້ວຍການຄຸ້ມຄອງການເຄື່ອນໄຫວຂອງທະນາຄານທຸລະກິດ ແລະ ສະຖາບັນການເງິນອື່ນໆ ເລກທີ 03 / ນ ຍ ລົງວັນທີ 23 ມັງກອນ 1992 ;
- ອີງຕາມການສະເໜີ ຂອງຜູ້ວ່າການ ທະນາຄານ ແຫ່ງ ສ.ປ.ປ. ລາວ;

### ນາຍົກລັດຖະມົນຕີ ອອກດຳລັດ:

### ໝວດທີ 1
### ບົດບັນຍັດ ທົ່ວໄປ

ມາດຕາ 1. ຈຸດປະສົງຂອງດຳລັດວ່າດ້ວຍການບັນຊີຂອງທະນາຄານແຫ່ງ ສ. ປ. ປ. ລາວ ແລະ ຂອງສະຖາບັນການເງິນທີ່ຂຶ້ນກັບທະນາຄານແຫ່ງ ສ. ປ. ປ. ລາວ ແມ່ນແນໃສ່ເພື່ອຮັບປະກັນເຮັດໃຫ້ທົ່ວລະບົບທະນາຄານຂອງ ສ. ປ. ປ. ລາວ ໄດ້ຈັດຕັ້ງປະຕິບັດລະບົບບັນຊີທະນາຄານຢ່າງເປັນເອກະພາບ ເພື່ອຄຸ້ມຄອງທຸລະກິດຂອງຕົນ, ສ້າງເງື່ອນໄຂສະດວກໃຫ້ແກ່ການກວດກາ ແລະ ຍົກສູງປະສິດທິພາບຂອງວຽກງານການບັນຊີ.

ມາດຕາ 2. ສະຖາບັນການເງິນທີ່ຂື້ນກັບທະນາຄານແຫ່ງ ສ. ປ. ປ. ລາວ ແມ່ນອົງການຈັດຕັ້ງທີ່ມີຖານະນິຕິບຸກຄົນ ຊຶ່ງດຳເນີນ ທຸລະກິດການເງິນ - ເງິນຕາ. ສະຖາບັນການເງິນ ດັ່ງກ່າວ ປະກອບດ້ວຍ : ທະນາຄານທຸລະກິດ, ບໍລິສັດເງິນທຶນ, ສະຫະກອນ ສິນເຊື່ອ ແລະ ອື່ນໆ ຂອງລາວ ແລະ ຂອງຕ່າງປະເທດ ຊຶ່ງດຳເນີນທຸລະກິດຢູ່ ສ ປ ປ ລາວ.

ມາດຕາ 3. ທະນາຄານແຫ່ງ ສ.ປ.ປ.ລາວ ແລະ ສະຖາບັນການເງິນທີ່ຂື້ນກັບທະນາຄານແຫ່ງ ສ.ປ.ປ.ລາວ ຕ້ອງຖື ບັນຊີ, ສ້າງ ແລະ ຈັດພິມ, ເປີດເຜີຍບັນຊີປະຈຳປີຂອງຕົນໃຫ້ຖືກຕ້ອງຕາມແຜນບັນຊີທົ່ວໄປ ຂອງທະນາຄານ ແຫ່ງ ສ.ປ.ປ.ລາວ ແລະ ຂອງທະນາຄານທຸລະກິດ ຊຶ່ງໄດ້ຄັດຕິດເປັນເອກະສານຊ້ອນທ້າຍຂອງດຳລັດ ສະບັບນີ້.

## ໝວດທີ II
## ການຈັດຕັ້ງວຽກງານການບັນຊີ

ມາດຕາ 4. ທະນາຄານແຫ່ງ ສ.ປ.ປ.ລາວ ແລະ ສະຖາບັນການເງິນທີ່ຂື້ນກັບທະນາຄານແຫ່ງ ສ.ປ.ປ.ລາວ ຕ້ອງຈັດຕັ້ງ ແລະ ປະຕິບັດ ລະບົບບັນຊີ ແລະ ເຄື່ອງມືຮັບໃຊ້ ເພື່ອເກັບກຳຂໍ້ມູນຂ່າວສານ ໃຫ້ຖືກຕ້ອງ ກັບແຜນບັນຊີທົ່ວໄປຂອງທະນາຄານແຫ່ງສ.ປ.ປ.ລາວ ແລະ ຂອງທະນາຄານທຸລະກິດ. ລະບົບບັນຊີດັ່ງກ່າວ ຕ້ອງປະຕິບັດຕາມຂັ້ນຕອນຂອງການກວດກາ ແລະ ຈັດວາງ ລະບົບການຄວບຄຸມພາຍໃນຢ່າງມີປະສິດທິຜົນ ເພື່ອຮັບປະກັນຄວາມເຊື່ອຖືຕໍ່ຂໍ້ມູນດັ່ງກ່າວ.

ມາດຕາ 5. ທະນາຄານແຫ່ງ ສ.ປ.ປ.ລາວ ແລະ ສະຖາບັນການເງິນທີ່ຂື້ນກັບທະນາຄານແຫ່ງ ສ.ປ.ປ.ລາວ ຕ້ອງຖືເອົາສາລະບານບັນຊີທີ່ກຳນົດໄວ້ໃນແຜນບັນຊີທົ່ວໄປ ເປັນພື້ນຖານ ແລະ ບ່ອນອີງໃນການຈັດວາງ, ປັບປຸງ ແລະ ເພີ່ມເຕີມລະບົບບັນຊີຂອງຕົນ.

ມາດຕາ 6. ອະນຸຍາດໃຫ້ ທະນາຄານ ແຫ່ງ ສ.ປ.ປ.ລາວ ແລະ ສະຖາບັນການເງິນທີ່ຂື້ນກັບທະນາຄານແຫ່ງ ສ. ປ. ປ. ລາວ ຊຶ່ງເຄື່ອນໄຫວທຸລະກິດເປັນເງິນຕາຕ່າງປະເທດ ຖືບັນຊີເປັນແຕ່ລະສະກຸນເງິນຕາມ ລະບຽບການຄຸ້ມຄອງການຈໍລະຈອນເງິນຕາຕ່າງປະເທດ ແລະ ວັດຖຸມີຄ່າ.

## ໝວດທີ III
## ເອກະສານລາຍງານສັງເຄາະ

ມາດຕາ 7. ການລາຍງານບັນຊີປະຈຳປີຂອງທະນາຄານແຫ່ງ ສ.ປ.ປ.ລາວ ແລະ ຂອງສະຖາບັນການເງິນທີ່ຂື້ນກັບທະນາຄານແຫ່ງ ສ.ປ.ປ.ລາວ ຈະຕ້ອງປະກອບເປັນລະບົບລາຍງານຄົບຊຸດ :

- ໃບສະຫລຸບຊັບສິນບັດ;
- ລາຍການນອກໃບສະຫລຸບຊັບສິນບັດ;
- ໃບລາຍງານຜົນໄດ້ຮັບ ແລະ
- ເອກະສານຊ້ອນທ້າຍ.

ບັນດາເອກະສານລາຍງານດັ່ງກ່າວ ຕ້ອງປະກອບເປັນລະບົບລາຍງານຄົບຊຸດ ແນໃສ່ ເພື່ອສະແດງໃຫ້ເຫັນຜົນການເຄື່ອນໄຫວ ແລະ ຖານະການເງິນຂອງທະນາຄານແຫ່ງ ສ. ປ. ປ. ລາວ ແລະ ຂອງສະຖາບັນການເງິນຢ່າງຖືກຕ້ອງກັບຕົວຈິງ ພ້ອມທັງຖືກຕ້ອງຕາມລະບຽບ ຫຼັກການ.

ມາດຕາ 8. ໃບສະຫລຸບຊັບສິນບັດຕ້ອງເຮັດເປັນຕາຕະລາງສະແດງໃຫ້ເຫັນລາຍການໃຫຍ່ຂອງຊັບສິນ ແລະ ຫນີ້ສິນ. ໃນນັ້ນ ຈະຕ້ອງໄດ້ສະແດງໃຫ້ເຫັນດອກເບັ້ຍທີ່ນອນຢູ່ໃນໄລຍະພອມຄິດໄລ່ ຊຶ່ງດອກເບັ້ຍຮອດກຳນົດທີ່ຈະຕ້ອງຈ່າຍ ຫຼື ຕ້ອງຮັບ.

ສ່ວນໃບລາຍງານຜົນໄດ້ຮັບໃນປີກໍຕ້ອງສະແດງອອກເປັນຮູບຕາຕະລາງເຊັ່ນດຽວກັນ. ທັງສອງເອກະສານນີ້ຕ້ອງລາຍງານຕາມຮູບແບບ ທີ່ໄດ້ກຳນົດໄວ້ ໃນແຜນບັນຊີທົ່ວໄປ.

ມາດຕາ 9. ເອກະສານຊ້ອນທ້າຍຕ້ອງສະແດງຂໍ້ມູນລະອຽດຖືກຕ້ອງ ແລະ ສອດຄ່ອງກັບຈຸດພິເສດຂອງກິດຈະການນັ້ນໆ ເພື່ອຊ່ວຍໃຫ້ຕີລາຄາໃບສະຫລຸບຊັບສິນບັດ, ໃບລາຍງານຜົນໄດ້ຮັບ, ຖານະ ການເງິນ ແລະຄວາມສ່ຽງ ເພື່ອໃຫ້ເຂົ້າໃຈແຈ້ງເນື້ອໃນດັ່ງກ່າວ.

ມາດຕາ 10. ບັນຊີລາຍງານປະຈຳປີ ຕ້ອງລາຍງານເປັນທົ່ວຫນ່ວຍຫນຶ່ງກີບ. ປີການບັນຊີຂອງທະນາຄານແຫ່ງ ສ. ປ. ປ. ລາວ ແລະ ສະຖາບັນການເງິນທີ່ຂຶ້ນກັບທະນາຄານແຫ່ງ ສ. ປ. ປ. ລາວ ແມ່ນເທົ່າກັບສິບສອງເດືອນ, ຄືເລີ່ມຕົ້ນ ວັນທີ 1 ມັງກອນ ແລະ ສິ້ນສຸດ ວັນທີ 31 ທັນວາ.

## ຫມວດທີ IV
## ການຕີມູນຄ່າ

ມາດຕາ 11. ທະນາຄານແຫ່ງ ສ. ປ. ປ. ລາວ ແລະ ສະຖາບັນການເງິນທີ່ຂຶ້ນກັບທະນາຄານແຫ່ງ ສ. ປ. ປ. ລາວ ຕ້ອງປະຕິບັດລະບຽບການລວມ ແລະ ລະບຽບການສະເພາະ ກ່ຽວກັບການຕີມູນຄ່າ ທີ່ກຳນົດໄວ້ໃນແຜນບັນຊີຂອງທະນາຄານແຫ່ງ ສ.ປ.ປ.ລາວ ແລະ ຂອງທະນາຄານທຸລະກິດ.

ມາດຕາ 12. ໃນການຕີມູນຄ່າຊັບສິນບັດຄົງທີ່ ແລະ ເຄື່ອງໃນສາງນັ້ນ ນອກຈາກປະຕິບັດການຕີມູນຄ່າ ຕາມແຜນບັນຊີຂອງທະນາຄານແຫ່ງ ສ. ປ. ປ. ລາວ ແລະ ຂອງທະນາຄານທຸລະກິດທີ່ໄດ້ ກຳນົດໄວ້ແລ້ວນັ້ນ ຍັງຈະຕ້ອງປະຕິບັດຕາມມາດຕາ 13, 14 ແລະ 15, ຂອງກົດຫມາຍ ວ່າດ້ວຍການບັນຊີ ວິສາຫະກິດ ແລະ ມາດຕາ 19 ຫາ 28 ຂອງດຳລັດສະບັບເລກທີ 05/ນຍ ລົງວັນທີ 24 ມັງກອນ 1992 ວ່າດ້ວຍການຈັດຕັ້ງ ປະຕິບັດກົດຫມາຍ ວ່າດ້ວຍການບັນຊີ ວິສາຫະກິດ

## ຫມວດທີ V
## ການກວດກາ ແລະ ການເປີດເຜີຍບັນຊີ

ມາດຕາ 13. ບັນຊີປະຈຳປີຂອງທະນາຄານແຫ່ງ ສ. ປ. ປ. ລາວ ຈະຖືກກວດກາຈາກລັດຖະບານ. ສະຖາບັນການເງິນທີ່ຂຶ້ນກັບທະນາຄານແຫ່ງ ສ. ປ. ປ. ລາວ ຕ້ອງໄດ້ດຳເນີນການກວດກາບັນຊີປະຈຳປີ ຂອງຕົນ ໂດຍເຈົ້າຫນ້າທີ່ກວດກາບັນຊີທີ່ໄດ້ຈົດທະບຽນ ຢ່າງຖືກຕ້ອງຕາມລະບຽບການ.

ມາດຕາ 14. ທະນາຄານແຫ່ງ ສ. ປ. ປ. ລາວ ຕ້ອງສົ່ງເອກະສານລາຍງານສັງເຄາະຄົບຊຸດທີ່ໄດ້ຜ່ານການກວດກາບັນຊີ ພ້ອມດ້ວຍບົດລາຍງານປະຈຳປີ ໄປໃຫ້ລັດຖະບານພ້ອມທັງຈັດພີມ ເປີດເຜີຍບັນຊີປະຈຳປີຂອງຕົນລົງໃນຈົດຫມາຍເຫດທາງລັດຖະການພາຍໃນສາມເດືອນຫລັງຈາກສິ້ນສຸດ ປີການບັນຊີ.

ມາດຕາ 15. ສະຖາບັນການເງິນທີ່ຂື້ນກັບທະນາຄານແຫ່ງ ສ.ປ.ປ.ລາວ ຕ້ອງສົ່ງລາຍງານບັນຊີປະຈໍາປີທີ່ໄດ້ຜ່ານການກວດກາບັນຊີໂດຍເຈົ້າໜ້າທີ່ກວດກາບັນຊີພ້ອມດ້ວຍບົດລາຍງານປະຈໍາປີໃຫ້ທະນາຄານແຫ່ງສ.ປ.ປ.ລາວ ແລະ ສົ່ງໃຫ້ລັດຖະການສ່ວຍສາອາກອນພ້ອມທັງແຈ້ງບັນຊີປະຈໍາປີຂອງຕົນລົງໃນຈົດໝາຍເຫດທາງລັດຖະການພາຍໃນສາມເດືອນຫລັງຈາກສິ້ນສຸດປີການບັນຊີ.

## ໝວດທີ VI
## ມາດຕະການ ຕໍ່ຜູ້ລະເມີດ

ມາດຕາ 16. ການລະເມີດບົດບັນຍັດຂອງດໍາລັດສະບັບນີ້ ຈະຖືກປະຕິບັດມາດຕະການຕາມສະຖານໜັກຫລືເບົາຕາມທີ່ໄດ້ກໍານົດໄວ້ໃນມາດຕາ 41, 42, 43, ແລະ 44 ຂອງດໍາລັດສະບັບ ເລກທີ 08/ນຍ ລົງວັນທີ 24 ມັງກອນ 1992 ວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການບັນຊີວິສາຫະກິດ .

## ໝວດທີ VII
## ບົດບັນຍັດສຸດທ້າຍ

ມາດຕາ 17. ມອບໃຫ້ທະນາຄານແຫ່ງ ສ.ປ.ປ.ລາວ ເປັນຜູ້ອອກຄໍາແນະນໍາລະອຽດກ່ຽວກັບການຈັດຕັ້ງປະຕິບັດຕາມດໍາລັດສະບັບນີ້ ໂດຍຮ່ວມກັບກັບກະຊວງການເງິນ .

ມາດຕາ 18. ທະນາຄານແຫ່ງ ສ.ປ.ປ.ລາວ ແລະ ສະຖາບັນການເງິນທີ່ຂື້ນກັບທະນາຄານແຫ່ງ ສ.ປ.ປ.ລາວ ມີໜ້າທີ່ປະຕິບັດດໍາລັດສະບັບນີ້ຢ່າງເຂັ້ມງວດ.

ມາດຕາ 19. ດໍາລັດ ສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ດໍາລັດສະບັບນີ້ປ່ຽນແທນລະບົບບັນຊີຂອງທະນາຄານແຫ່ງລັດ ເລກທີ237/ທຊລ - ລົງວັນທີ 29 ພຶດສະພາ 1980, ຄໍາຕົກລົງເລກທີ 02/ທຄ ຫລ ລົງວັນທີ 13 ກຸມພາ 1987 ແລະ ບັນດາຂໍ້ກໍານົດ ທີ່ຂັດກັບ ດໍາລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ວຽງຈັນ, ວັນທີ 8 ເດືອນ 1 1996

ນາຍົກລັດຖະມົນຕີ ແຫ່ງ ສ.ປ.ປ. ລາວ

ຄໍາໄຕ ສີພັນດອນ